ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 17 ຫາ 21 ກໍລະກົດ 2023



ກາເຟ ກາຍເປັນພືດສຳຄັນ ອັນດັບທີ 2 ທີ່ຊາວກະສິກອນຂະໜາດນ້ອຍປູກໃນ ສປປ ລາວ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກາເຟ ກາຍເປັນພືດສຳຄັນ ອັນດັບທີ່ 2 ທີ່ຊາວກະສິກອນຂະໜາດນ້ອຍປູກໃນ ສປປ ລາວ

ຊາ ແລະ ກາເຟ ແມ່ນເຄື່ອງດື່ມຍອດນິຍົມທີ່ສຸດ ທີ່ຄົນທົ່ວໂລກມັກດື່ມກັນໃນຊີວິດປະຈຳວັນ. ຍ້ອນ ເຫັນໄດ້ຄວາມສຳຄັນດັ່ງກ່າວ ປະກອບໃສ່ສະພາບ ດິນຟ້າອາກາດທີ່ເອື້ອອຳນວຍ ແລະ ມູນເຊື້ອຂອງ ປະຊາຊົນລາວບັນດາເຜົ່າ ທາງພັກ ແລະ ລັດຖະບານ ລາວ ກໍ່ຄືກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ສຸມໃສ່ ພັດທະນາການຜະລິດ ຊາ ແລະ ກາເຟ ໃຫ້ໄດ້ທັງ ປະລິມານ ແລະ ຄຸນນະພາບ ຢ່າງຕໍ່ເນື່ອງຕະຫຼອດ ມາ.

ຊາ ແມ່ນ ຕົ້ນໄມ້ທີ່ກຳເນີດເກີດຂຶ້ນທົ່ວໄປ ໃນ ເຂດພູດອຍທາງພາກເໜືອຂອງປະເທດລາວ ແລະ ປະຊາຊົນທ້ອງຖິ່ນ ມີມູນເຊື້ອໃນການຜະລິດຊາ ເພື່ອ ບໍລິໂພກພາຍໃນຄອບຄົວ ມາໄດ້ຫຼາຍທົດສະວັດ. ປະຊາຊົນລາວບັນດາເຜົ່າໃນເຂດເນີນສູງ ເປັນຜູ້ ລິເລີ່ມກ່ອນໝູ່ໝົດໃນການປູກຊາ ແລະ ປູກຄັ້ງທຳ ອິດ ເມື່ອ 3,200 ປີກ່ອນ.

ເລີ່ມແຕ່ຊຸມປີ 1990 ເປັນຕົ້ນມາ, ຊາ ໄດ້ຮັບການ ຊຸກຍູ້ສົ່ງເສີມຜະລິດ ເພື່ອເປັນສິນຄ້າສົ່ງອອກ ແຕ່ຍັງ ເປັນຂະໜາດນ້ອຍ ຈຳກັດຢູ່ແຕ່ພຽງ ແຂວງຜົ້ງສາລີ, ໃນບາງບໍລິເວນ ໃນບາງເມືອງ ຂອງບັນດາແຂວງ ພາກເໜືອ ແລະ ພູພຽງບໍລະເວນ. ຫຼັງຈາກນັ້ນ ແຕ່ ປີ 2003 ເປັນຕົ້ນມາ, ຊາ ທີ່ຜະລິດໄດ້ໃນພື້ນທີ່ດັ່ງ ກ່າວ ໄດ້ມີຊື່ສຽງໂດ່ງດັງ ແລະ ຮູ້ຈັກຢ່າງກ້ວາງຂວາງ ວ່າເປັນຊາທຳມະຊາດທີ່ມີຄຸນນະພາບສູງ ຊຶ່ງໄດ້ ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ແລະ ເພີ່ມການສະໜັບສະໜູນ ໃນການພັດທະນາ ຂະແໜງຊາ ຂອງລາວ ຕະຫຼອດມາ.

ໃນປີ 2020, ທົ່ວ ສປປ ລາວ ມີເນື້ອທີ່ຊາທັງໝົດ 7,720 ເຮັກຕາ ເພີ່ມຂຶ້ນ 1.3 ເທົ່າຕົວ ເມື່ອທຽບໃສ່ປີ 2012. ເຂດພາກເໜືອ ເພີ່ມຂຶ້ນ 1.1 ເທົ່າຕົວ, ພາກ ກາງ 3.5 ເທົ່າຕົວ ແລະ ພາກໃຕ້ 0.6 ເທົ່າຕົວ. ໃນ ເວລາດຽວກັນ ການຜະລິດຊາ ໄດ້ທັງໝົດ 16,400 ໂຕນ ເພີ່ມຂຶ້ນ 3.1 ເທົ່າຕົວ. ເຂດພາກເໜືອ ເພີ່ມ ຂຶ້ນ 2.7 ເທົ່າຕົວ, ພາກກາງ 3.0 ເທົ່າຕົວ ແລະ ພາກ



ໃຕ້ 10.6 ເທົ່າຕົວ.

ການຜະລິດກາເຟ ກໍ່ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງເຊັ່ນດຽວກັນ. ກາເຟ ໄດ້ຖືກນຳມາປູກຢູ່ພູພຽງບໍລະເວນ ພາກໃຕ້ຂອງປະເທດລາວ ເປັນຄັ້ງທຳອິດ ໃນປີ 1920 ໂດຍຊາວຝຣັ່ງເສດ. ຫຼັງຈາກນັ້ນ ການສົ່ງເສີມການຜະລິດ ກາເຟ ກໍ່ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເຖິງແມ່ນວ່າຈະພົບກັບບັນຫາ ແລະ ອຸປະສັກຫຼາຍປະການ ເຊັ່ນ: ສົງຄາມ, ອາກາດໜາວຈັດ, ການລະບາດຂອງພະຍາດໃບໄໝ້ ແລະ ການປ່ຽນແປງດ້ານການຈັດຕັ້ງ ໃນຂະແໜງການກາເຟ. ໃນຊຸມ ປີ 90 ລັດຖະບານລາວ ແລະ ຄູ່ຮ່ວມພັດນາ ໄດ້ເລີ່ມຕົ້ນຊຸກຍູ້ສົ່ງເສີມການປູກກາເຟຢ່າງຈິງຈັງ.

ປີ 2010, ບັນດາໂຄງການພັດທະນາຊົນນະບົດໄດ້ນຳເອົາກາເຟ ມາຊຸກຍູ້ສົ່ງເສີມປູກ ຢູ່ທາງພາກເໜືອຂອງປະເທດ ເພື່ອທົດແທນການຖາງປ່າເຮັດໄຮ່ ແລະ ການປູກພືດດ່ຽວ ພ້ອມທັງເປັນທາງເລືອກໃນການສ້າງລາຍຮັບເພີ່ມ ໃຫ້ແກ່ປະຊາຊົນລາວບັນດາເຜົ່າ. ຜ່ານການຈັດຕັ້ງປະຕິບັດໂຄງການເຫັນວ່າສະພາບເງື່ອນໄຂທາງນິເວດກະສິກຳ ແລະພູມີອາກາດ ມີຄວາມເໝາະໃນການປູກກາເຟ ແລະຜົນຜະລິດທີ່ໄດ້ກໍ່ມີຄຸນນະພາບດີ ແລະ ມີເອກະລັກສະເພາະຕົວ ທາງດ້ານລົດຊາດ. ຍ້ອນສະພາບ ແລະເງື່ອນໄຂທີ່ເປັນທ່າແຮງດັ່ງກ່າວ, ເປັນທີ່ຄາດການກັນວ່າ ໃນ 10 ປີຕໍ່ໜ້າ ທາງພາກເໜືອຂອງ ລາວຈະກາຍເປັນເຂດຜະລິດກາເຟ ແຫ່ງໃໝ່ຂອງລາວແລະ ໃນແຕ່ລະປີ ຄາດວ່າຈະສາມາດຜະລິດກາເຟໄດ້ປະມານ 10 ຫາ 15% ຂອງຜົນຜະລິດກາເຟທັງໝົດທົ່ວປະເທດ, ຖ້າຫາກມີການພັດທະນາຢ່າງຈິງຈັງ ແລະ ເນື່ອງນິດລຽນຕິດ.

ກາເຟ ໄດ້ກາຍເປັນພືດສຳຄັນ ອັນດັບທີ່ 2 ທີ່ຊາວກະສິກອນຂະໜາດນ້ອຍໃນທົ່ວປະເທດ ປູກ ຖັດຈາກ ຢາງພາລາ. ໃນໄລຍະ 10 ປີ ຜ່ານມາ ເນື້ອທີ່ປູກກາເຟໄດ້ ເພີ່ມຂຶ້ນປະມານ 10%. ໃນປີ 2021,



ເນື້ອທີ່ປູກກາເຟ ຢູ່ພາກເໜືອຂອງປະເທດ ມີປະມານ 3,100 ເຮັກຕາ, ເພີ່ມຂຶ້ນ 4 ເທົ່າຕົວ ເມື່ອທຽບໃສ່ ປີ 2012, ໃນຂະນະດຽວກັນເນື້ອທີ່ປູກກາເຟ ຢູ່ທາງພາກໃຕ້ ເພີ່ມຂຶ້ນພຽງ 4%.

ຄຽງຄູ່ກັນນັ້ນ, ຜົນຜະລິດກາເຟກໍ່ມີການເພີ່ມເຊັ່ນດຽວກັນ. ໃນປີ 2021 ຜ່ານມາ, ຜົນຜະລິດກາເຟທັງໝົດທົ່ວປະເທດ ມີປະມານ 161,200 ໂຕນ ເພີ່ມຂຶ້ນ 85% ເມື່ອທຽບໃສ່ ປີ 2012. ໃນໄລຍະ 10 ປີຜ່ານມາ, ຜົນຜະລິດກາເຟ ຢູ່ເຂດພາກເໜືອກໍ່ ເພີ່ມຂຶ້ນ 11 ເທົ່າຕົວ ຮອງລົງມາແມ່ນ ເຂດພາກໃຕ້ ເພີ່ມຂຶ້ນ 78%. ສ່ວນ ຢູ່ເຂດພາກກາງ ຜົນຜະລິດກາເຟ ຫຼຸດລົງ 46%.

ດ້ານການສົ່ງອອກ ຊາ ແລະ ກາເຟ ຂອງລາວ ກໍ່ມີເຕີບໂຕຢ່າງຕໍ່ເນື່ອງ. ໃນປີ 2021, ປະເທດລາວສົ່ງອອກຊາ ມີມູນ 1.78 ລ້ານໂດລາ ເມື່ອທຽບໃສ່ 10 ປີກ່ອນ ປະເທດລາວສົ່ງອອກຊາ ມີມູນຄ່າ ພຽງແຕ່ 0.2 ລ້ານໂດລາ, ເພີ່ມຂຶ້ນ ເກືອບ 9 ເທົ່າຕົວ.

ການສົ່ງອອກກາເຟ ກໍ່ເຊັ່ນດຽວກັນ. ໂດຍປະຕິບັດຕາມແຜນງານສົ່ງເສີມການສົ່ງອອກກາເຟລາວ 2021-2025 (Coffee Sector Export Roadmap 2021-2025). ໃນປີ 2021, ປະເທດລາວສົ່ງອອກກາເຟ ມີມູນຄ່າທັງໝົດເກືອບ 90 ລ້ານໂດລາສະຫະລັດ, ກວມເອົາ 1.5% ຂອງມູນຄ່າສົ່ງອອກທັງໝົດ. ກາເຟ ແມ່ນໜຶ່ງ ໃນຜະລິດຕະພັນກະສິກຳທີ່ສົ່ງອອກທີ່ສຳຄັນ ຖັດຈາກ ໝາກກ້ວຍ. ປະເທດລາວໄດ້ຖືກຈັດ ຢູ່ໃນລຳດັບ ທີ 34 ຂອງໂລກ ທີ່ເປັນປະເທດທີ່ມີມູນຄ່າສົ່ງອອກກາເຟສູງທີ່ສຸດ ແລະ ໃນລຳດັບ ທີ 32 ເປັນປະເທດທີ່ມີປະລິມານສົ່ງອອກກາເຟຫຼາຍທີ່ສຸດ.

ແຫຼ່ງຂໍ້ມູນຈາກ: ການລາຍງານຂອງຫົວໜ້າກົມປູກຝັງ, ໃນກອງປະຊຸມ ລາຍງານຜົນການສຶກສາຄວາມເປັນໄປໄດ້ ໄລຍະທີ 2 ຂອງ ໂຄງການສ້າງເສດຖະກິດສີຂຽວ ສຳຫຼັບຕ່ອງໂສ້ມູນຄ່າກາເຟ ແລະ ຊາ (GREEN CUP), ວັນທີ 28 ກໍລະກົດ 2023 ທີ່ ໂຮງແຮມ ແກຣນ ວຽງຈັນ, ນະຄອນຫຼວງວຽງຈັນ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;